(ລົງເວບໄຊ)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເລກທີ 0202 /ກທຄວ.ອຄ

ນະຄອນຫລວງວຽງຈັນ,ວັນທີ 25 ກຸມພາ 2020

## ແຈ້ງການ

ເຖິງ: - ເຈົ້າໜ້າທີ່ທະບຽນວິສາຫະກິດ, ພະແນກອຸດສາຫະກຳ ແລະການຄ້າ ຂັ້ນແຂວງ, ນະຄອນຫລວງ;

- ເຈົ້າໜ້າທີ່ທະບຽນວິສາຫະກິດ ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ, ເທດສະບານ.

ເລື່ອງ: ແຈ້ງໃຫ້ນຳໃຊ້ລະບົບໂປຣແກຣມຕິດຕາມເວລາການຂຶ້ນທະບຽນວິສາຫະກິດ.

- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານ ໃນການດຳເນີນທຸລະກິດ ຢູ່ ສປປລາວ ສະບັບເລກທີ 02/ນຍ, ລົງວັນທີ 01/02/2018;

- ອີງຕາມຂໍ້ຕົກລົງຂອງ ທ່ານລັດຖະມົນຕີກະຊວງອຸດສາຫະກຳ ແລະການຄ້າ ວ່າດ້ວຍການຂຶ້ນທະບຽນວິສາຫະກິດ ເລກທີ0023/ອຄ.ກທຄວ, ລົງວັນທີ 9 ມັງກອນ 2019

ກົມທະບຽນ ແລະຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະການຄ້າ ໄດ້ປັບປຸງລະບົບໂປຣແກຣມທະບຽນວິສາຫະກິດ ເພື່ອເປັນຂໍ້ມູນຢັ້ງຢືນ ແລະຕິດຕາມເວລາໃນການອອກທະບຽນວິສາຫະກິດຂອງເຈົ້າໜ້າທີ່ທະບຽນວິສາຫະກິດ ໃນຂອບເຂດທົ່ວປະເທດ ໃຫ້ເປັນໄປຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະລະບຽບການ, ຈຶ່ງໄດ້ແຈ້ງມາຍັງເຈົ້າໜ້າທີ່ທະບຽນວິສາຫະກິດ ຊາບ ແລະຈັດຕັ້ງປະຕິບັດ ດັ່ງນີ້:

1. ເລີ່ມແຕ່ວັນທີ 02 ມີນາ 2020 ເປັນຕົ້ນໄປ ໃຫ້ເລີ່ມຈັດຕັ້ງປະຕິບັດລະບົບໂປຣແກຣມທະບຽນວິສາຫະກິດ(ປັບປຸງໃໝ່) ທີ່ໄດ້ຕິດພັນກັບການຕິດຕາມເວລາການຂຶ້ນທະບຽນວິສາຫະກິດ ຂອງເຈົ້າໜ້າທີ່ທະບຽນວິສາຫະກິດ, ໂປຣແກຣມດັ່ງກ່າວນີ້ບໍ່ແມ່ນໂປຣແກຣມໃໝ່ ພຽງແຕ່ປັບປຸງບາງບ່ອນເຂົ້າໃນໂປຣແກຣມທະບຽນທີ່ມີແລ້ວ ເພື່ອໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດໄດ້ປ້ອນຂໍ້ມູນເຂົ້າຕື່ມໃນເວລາພິມໃບທະບຽນວິສາຫະກິດ;

2. ວິທີເຂົ້າວັນທີໃຫ້ເລືອກຕາມປະຕິທິນທີ່ມີໃນໂປຣແກຣມແລ້ວ (ຫ້າມບໍ່ໃຫ້ພິມຕົວເລກໃສ່ເດັດຂາດ);

3. ເພື່ອສະດວກໃນການຕິດຕາມ ໃນລະບົບໂປຣແກຣມ ໄດ້ສ້າງຕາຕະລາງຕິດຕາມໄວ້ແລ້ວ, ການລາຍງານຈະບໍ່ນັບເອົາວັນພັກລັດຖະການ (ວັນເສົາ ແລະ ອາທິດ);

4. ສຳລັບການເບິ່ງຂໍ້ມູນເວລາການຂຶ້ນທະບຽນວິສາຫະກິດ ເຈົ້າໜ້າທີ່ທະບຽນວິສາຫະກິດຂັ້ນກົມ ສາມາດເບິ່ງໄດ້ໃນຂອບເຂດທົ່ວປະເທດ, ຂັ້ນແຂວງສາມາດເບິ່ງໄດ້ຂອງແຂວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງທີ່ຂຶ້ນກັບແຂວງຕົນ ແລະ ຂັ້ນຫ້ອງການອຸດສາຫະກຳ ແລະການຄ້າເມືອງ ແມ່ນເບິ່ງໄດ້ສະເພາະແຕ່ເມືອງຕົນເທົ່ານັ້ນ.(ລະອຽດໄດ້ມີຄູ່ມືແນະນຳການນຳໃຊ້ໂປຣແກຣມ ຄັດຕິດພ້ອມນີ້).

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ຫົວໜ້າກົມ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ດຣ.ສົມພອງ ພຽນພິບົດ

ຕິດຕໍ່ພົວພັນ

- ນ. ວົງປະດິດ 02055617182, ບຸນຈັນ 02058589001.
- ເປືອດສແຮັບ 02093820604

สแกนด้วย CamScanner